**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາ
ລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ
ຫ້ອງການ ຄຊກລ

ເລກທີ 1164/ຫຄຊກລ

# ບົດບັນທຶກ

# ກອງປະຊຸມກຸ່ມວິຊາການ ສຳຫຼວດ ແລະ ເກັບກູ້ ລບຕ ປະຈຳໄຕມາດ IV ປີ 2023

ກອງປະຊຸມກຸ່ມວິຊາການ ສຳຫຼວດ ແລະ ເກັບກູ້ ລບຕ ທີ່ໄດ້ໄຂຂຶ້ນໃນເວລາ 08:30 ຫາ 16:00 ໃນວັນທີ 20 ທັນວາ ປີ 2023 ທີ່ຫ້ອງປະຊຸມໂຮງແຮມ Landmark Mekong Riverside Hotel ໂດຍເປັນປະທານຂອງ ທ່ານ ບຸນເພັງ ສີສະຫວັດ ຮອງຫົວໜ້າຫ້ອງການ ຄຊກລ ແລະ ມີຜູ້ເຂົ້າຮ່ວມດັ່ງລຸ່ມນີ້:

## I. **ຜູ້ເຂົ້າຮ່ວມ.**

1. ຫ້ອງການ ຄຊກລ: ຮອງຫົວໜ້າຫ້ອງການ, ຫົວໜ້າ, ວິຊາການ ໜ່ວຍງານຄຸ້ມຄອງການສຳຫລວດ ແລະ ເກັບກູ້, ຕາງໜ້າໜ່ວຍງານ ຄຸ້ມຄອງຄຸນນະພາບ, ຕາງໜ້າໜ່ວຍງານຄຸ້ມຄອງຖານຂໍ້ມູນ, ຕາງໜ້າໜ່ວຍງານປະຊາສຳພັນ ຫ້ອງການ ຄຊກລ ແລະ ໜ່ວຍງານຄຸ້ມຄອງບຸກຄະລາກອນ ລວມ 8 ທ່ານ.
2. ຕາງໜ້າຈາກ 6 ອົງການມະນຸດສະທຳ: ໂຄງການເກັບກູ້ລະເບີດແຫ່ງຊາດ 2 ທ່ານ, ອົງການເອັນພີເອ 2 ທ່ານ, ອົງການຮາໂລທຣັສ 2 ທ່ານ, ອົງການເອັຈໄອ 1 ທ່ານ, ອົງການແມັກປະຈຳ ສປປ ລາວ 3 ທ່ານ, ແລະ ກອງກວດກູ້ເພື່ອມະນຸດສະທຳ ກອງທັບ 3 ທ່ານ ລວມ: 13 ທ່ານ.
3. ຈາກອົງການສະຫະປະຊາຊາດ 2 ທ່ານ;
4. ບໍລິສັດ ເທທາເທັກ(Tt) 2 ທ່ານ;
6. ອົງການໄຈກາ Jica ປະຈຳ ຄກລ 1 ທ່ານ
7. ອົງການຄອຍກາ KOICA ປະຈຳ ຫ້ອງການ ຄຊກລ 1 ທ່ານ
6. ຈາກ 18 ບໍລິສັດເກັບກູ້ລະເບີດທັງພາຍໃນ ແລະ ຕ່າງປະເທດ ລວມ: 18 ທ່ານ

## II. ຈຸດປະສົງ

**ການແລກປ່ຽນຂໍ້ມູນຂ່າວສານສຳລັບວຽກງານປະຕິບັດງານ ການສຳຫຼວດ, ເກັບກູ້ ແລະ ທຳລາຍ ລບຕ ລະຫ່ວາງ ຫ້ອງການ ຄຊກລ ອົງການປະຕິບັດງານ ແລະ ຄູ່ຮ່ວມພັດທະນາ.**

- ຜົນສຳເລັດ ການຈັດຕັ້ງປະຕິບັດວຽກງານການສຳຫຼວດ ແລະ ເກັບກູ້ ປະຈຳໄຕມາດ III. Achievement Survey and Clearance Q III.
- ລາຍງານຜົນຄວາມຄືບໜ້າໃນການປັບປຸງມາດຕະຖານແຫ່ງຊາດ Progress National Standards Review.
- ປັບປຸງແບບຟອມລາຍງານຜົນສຳເລັດຂອງການກວດກູ້ ລບຕ( TS, AC Completion report review )
- ການໝາຍ ລບຕ ທີ່ກວດພົບໃນສະໜາມກວດກູ້ ເພື່ອປ້ອງກັນຄວາມປອດໄພ ແລະ ເສຍຫາຍ Marking UXO found on Ares Clearance

- ເຄື່ອງກວດລະເບີດ ສະໜິດຕ່າງໆ ທີ່ນຳໃຊ້ໃນຂະແໜງການ, ການປັບຄ່າຂອງເຄື່ອງກວດ. UXO Detector in Sectors , Detector Setting, Detector Configuration
- ແຜນປະຕິບັດງານສຳຫຼວດ ແລະ ເກັບກູ້ ລບຕ ປີ 2024 (ໃຫ້ແຕ່ລະ ອົງການປະຕິບັດງານນຳສະເໜີ) Survey and Clearance Work plan 2024
- ອົງການ ເອັນພີເອ ນຳສະເໜີ ແຜນທຳລາຍ MK 82 ຟິວ FMU, ບ້ານເສັດຄົດ ເມືອງປາກຊ່ອງ ແຂວງຈຳປາສັກ.Planning Destroyed Aircraft bomb MK 82 Setkhot village, Parksong District
- MK 82 Fuze 346 under power line at Attapeu province ກ້ອງແລວສາຍສົ່ງໄຟຟ້າແຮງສູງ 500 KV ບ້ານ ນ້ຳຊວນ ເມືອງພູວົງ ແຂວງອັດຕະປື
- MK 82 Fuze 346 Ta Oi District, Saravan Province Qty 02.ຈຳນວນ 02 ລູກ ບ້ານຕຸງໂກງ ເມືອງຕະໂອ້ຍ ແຂວງສາລະວັນ.

## III. ເນື້ອໃນກອງປະຊຸມ

ຫ້ອງການ ຄຊກລ ມີຄວາມພະຍາຍາມໃນການ ໃນການປັບປຸງມາດຕະຖານແຫ່ງຊາດ, ມາຮອດປະຈຸບັນສຳເລັດໃນບົດທີ່ 24 ແລະ ກຽມໃຫ້ປະທານຮັບຮອງ ເພື່ອນຳໃຊ້ ຊຶ່ງເປັນບົດໜຶ່ງທີ່ສຳຄັນ ທີ່ຈະນຳໃຊ້ໃນການສຳຫຼວດ 1,2,3.

ການປັບປຸງມາດຕະຖານແຫ່ງຊາດ ຕາມແຜນແມ່ນໃຫສຳເລັດໃນປີ 2024 ຜົນດັ່ງກ່າວຈະເອົາໄປລາຍງານໃນກອງປະຊຸມກຸ່ມວິຊາການຂອງຂະແໜງການ ຄັ້ງທີ 1 ປີ 2024, ປະຈຸບັນຮ່າງ ພາລະບົດບາດ ແລະ ຄວາມຮັບຜິດຊອບ ຂອງຄະນະວິຊາການ ແລະ ແຕ່ງຕັ້ງຄະນະຮັບຜິດຊອບ ຍື່ນໄປຫາປະທານ ເພື່ອເຊັນຮັບຮອງ.

ການຝຶກອົບຮົມ ວິຊາການທຳລາຍລະເບີດຂັ້ນ 4 ປະຈຸບັນມີຄວາມພ້ອມ ລໍຖ້າຊ່ຽວຊານຜູ້ບໍລິຫານຊຸດຝຶກອົບຮົມນີ້ ໃນເດືອນມັງກອນ.

ການປັບປຸງແບບຟອມລາຍງານກວດກູ້ ລບຕ, ການປັບປຸງແບບຟອມດັ່ງກ່າວ ເພື່ອໃຫ້ສອດຄ່ອງກັບສະພາບຕົວຈິງ, ມີຂໍ້ລະບຸໄວ້ໃນບົດລາຍງານ ແຕ່ບໍ່ໄດ້ນຳໃຊ້, ໃນນີ້ໄດ້ເພີ່ມເຕີມໃໝ່ບາງຂໍ້ ເຊັ່ນ: ຜູ້ໄດ້ຮັບຜົນປະໂຫຍດທາງອ້ອມ(Indirect) ໂດຍສອດຄ່ອງກັບມາດຕະຖານສາກົນ (IMAS).

ເຄື່ອງກວດລະເບີດ ສະໜິດຕ່າງໆ ທີ່ນຳໃຊ້ໃນຂະແໜງການ, ການປັບຄ່າຂອງເຄື່ອງກວດ. UXO Detector in Sectors, ສະເໜີໃຫ້ບັນດາອົງການປະຕິບັດງານກ່ອນຈະສັ່ງຊື້ເຄື່ອງກວດລະເບີດເຂົ້າມາຮັບໃຊ້ໃນອົງການ ແມ່ນໃຫ້ປຶກສາກັບວິຊາການ ຄຊກລ ເພື່ອຫຼີກລ້ຽງເຄື່ອງສັ່ງຊື້ເຂົ້າມາໃຊ້ບໍ່ໄດ້ ຕາມຈຸດປະສົງຂອງໂຄງການ. ໃນກອງປະຊຸມໄດ້ແລກປ່ຽນດ້ານການຕັ້ງຄ່າເຄື່ອງກວດ Vallon VMXC 1-3 ອົງການຮາໂລທຣັດສ໌, ຫົວໜ້າທີມສາມາດຕັ້ງຄ່າເຄື່ອງກວດ GB 30.

ການໝາຍລະເບີດທີ່ກວດພົບໃນສະໜາມກວດກູ້ ຜ່ານມາມີການເສຍຫາຍ, ຊຶ່ງອາດນຳໄປສູ່ການເກີດອຸປະຕິເຫດໄດ້ ກໍລະນີຫາກກຸ່ມຄົນບໍ່ດີລັກໄປມ້າງ ຫຼື ນຳໄປໃຊ້ໃນເປົ້າໝາຍອື່ນ, ສະນັ້ນ ເພື່ອປ້ອງກັນບໍ່ໃຫ້ເສຍຫາຍຫາກບໍ່ທັນທຳລາຍໃນມື້ນັ້ນ ຈຶ່ງແນະນຳໃຊ້ດິນຖົມ ແລະ ໝາຍດ້ວຍ GPS .

ລະເບີດທີ່ພົບເຫັນໃນແຕ່ລະ ແຂວງໂດຍຜ່ານການສຳຫຼວດ ເພື່ອສຳລັບການຝຶກອົບຮົມວິຊາການທຳລາຍລະເບີດຂັ້ນ 4 ຖ້າບໍ່ສາມາດເກັບຮັກສາຄວາມປອດໄພໄດ້ກໍໃຫ້ທຳລາຍ ແຕ່ສຳຄັນໃຫ້ລາຍງານໃຫ້ຫ້ອງການ ຄຊກລ ຫຼື ສູນຝຶກອົບຮົມແຫ່ງຊາດ.

ຄກລ ສະເໜີແຜນທຳລາຍບົມໃຫ່ຍຈຳນວນ 2 ໜ່ວຍ ທີ່ MK 82 fuze 346 ປະຊາຊົນລາຍງານມານານສົມຄວນຢູ່ ບ້ານຕຸງໂກງ ເມືອງ ຕະໂອ້ຍ ແຂວງສາລະວັນ ຈະໃຫ້ສຳເລັດໃນທ້າຍ ເດືອນທັນວາ ປີ 2023.

ຄກລ ຈະສືບຕໍ່ແກ້ໄຂທຳລາຍ ລບຕ ແບບສຸກເສີນທີ່ປະຊາຊົນລາຍງານແຕ່ ປີ 2022 ຊ່ວງໄລຍະ ຄກລ ຂາດທຶນສະໜັບສະໜູນ ຢູ່ ແຂວງຫຼວງພະບາງ ແລະ ຫົວພັນ. ໂດຍຈະນຳໃຊ້ທີມງານຈາກແຂວງຄຳມ່ວນ ໄປຊ່ວຍແກ້ໄຂ.

ອົງການປະຕິບັດງານນຳສະເໜີ ຜົນສຳເລັດວຽກໃນປີ 2023 ແລະ ແຜນຕົວເລກສຳຫຼວດ, ກວດກູ້ ລບຕ ປະຈຳປີ 2024:

- ຄກລ ແຜນຖືກຮັບຮອງໃນເດືອນຕຸລາ, ຈະມີຕົວເລກກວດກູ້ ປີ 2024 ເພີ່ມຂຶ້ນ ເພາະ ແຂວງຫຼວງພະບາງ, ຫົວພັນ, ເຊກອງ ແລະ ຈຳປາສັກຈະໄດ້ຮັບທຶນໄວໆນີ້. ຈະມີແຜນຂະຫຍາຍການຝຶກອົບຮົມ ແລະ ເງື່ອນໄຂຈັດບຸລິມະສິດ ວຽກງານ ໂຄສະນາຄວາມສ່ຽງໄພ ຈາກ ລບຕ ແລະ ກວດກູ້ ລບຕ ໂດຍສະໜັບສະໜູນຈາກອົງການໄຈກາ.
- ແຜນກວດກູ້ ປີ 2023 ຄາດຄະເນ 9 ແຂວງ 3.175 ເຮັກຕາ, ຈຳນວນ 80 ທີມ ສະເລ່ຍ 35 ຮຕ/ທີມ/ປີ.
- ອົງການຮາໂລທຣາດສ໌ ເຮັດວຽກຕົວຈິງ 85 ທີມ, ທີມສຳຫຼວດ 5 ລະ ທີມກວດກູ້ ລະເບີດຝັງດິນ 2 ທີມ ສະເລ່ຍ....
- ແຜນປີ 2024 ຈະເຮັດວຽກຢູ່ 2 ແຂວງ ຊຶ່ງໄດ້ຮັບທຶນຈາກຢູເອັນດີພີ 2 ແຂວງ: ບໍລິຄຳໄຊ ແລະ ແຂວງວຽງຈັນ ຈຳນວນ 206,7 ເຮັກຕາ.
- ອົງການແມັກ, ອົງການແມັກປະຕິບັດງານຢູ່ 2 ແຂວງຊຽງຂວາງ ແລະ ແຂວງຄຳມ່ວນ, ແຂວງຊຽງຂວາງ ເລກກວດກູ້ 1.264 ຮຕ ແລະ ແຂວງ ຄຳມ່ວນ 154,3 ຮຕ.
- ອົງການເອສ໌ໄອ ແຜນກວດກູ້ ຢູ່ແຂວງຜົ້ງສາລີ 4 ເຮັກຕາ ຕາມເອັມໂອຢູ ຈະໝົດໃນເດືອນ 8, 2024. ຈາກນັ້ນ ຊ່ວຍຊານໄດ້ແກ້ໄຂຂໍ້ມູນ ລບຕ ທີ່ພົບເຫັນຢູ່ ຄກລ ແຂວງຊຽງຂວາງ ຊຶ່ງບໍ່ສາມາດພິສູດໄດ້. ລະເບີດດັ່ງກ່າວເປັນ ລະເບີດຊີ້ບອກຈຸດຖິ້ມລະເບີດໃນທະເລ (SEA MARKER MK6, Phosphorus)
- ກອງປະຊຸມໄດ້ຕົກລົງເປັນເອກະພາບສົ່ງບົດລາຍງານຄວາມຄືບໜ້າປະຈຳເດືອນໃນວັນທີ 25 ຂອງທຸກໆເດືອນ ເພື່ອຈະໄດ້ລາຍງານລັດຖະບານໃຫ້ທັນກັບເວລາ.

- ຂໍ້ສະເໜີຈາກຜູ້ເຂົ້າຮ່ວມປະຊຸມ

- ວຽກສະເໜີກວດກູ້ແຜນພັດທະນາ ສະເໜີຈາກອົງການອົງການປົກຄອງທ້ອງຖິ່ນສະເໜີມາຊັກຊ້າ ຖ້າຈະປ່ຽນແຜນຍາກສຳລັບອົງການທີ່ແຜນຮັບຮອງຈາກຜູ້ໃຫ້ທຶນ ແລ້ວ.
- ຄວາມເລິກຂອງການເກັບກູ້ ເມື່ອສຳເລັດມີບົດລາຍງານຜົນສຳເລັດຕາມຈຸດປະສົງນຳໃຊ້ດິນ, ຈາກນັ້ນ ດິນປ່ຽນໄປນຳໃຊ້ເປົ້າໝາຍອື່ນ ສະເໜີຂໍກວດເລິກ ຈະກັບຄືນໄປກວດໄດ້ບໍ? ເພາະດິນຖືກມອບຮັບໄປແລ້ວ.
- ຕາງໜ້າຈາກບໍລິສັດເກັບກູ້ ລບຕ ສະເໜີໃຫ້ ຄຊກລ ເປີດສອນຫຼັກສູດຝຶກອົບຮົມເກັບກູ້ລະເບີດທົ່ວໄປ ທຸກຄົນສາມາດມາຮຽນໄດ້ແຕ່ຕ້ອງຈ່າຍຄ່າຮຽນຄືຫຼັກສູດວິຊາຊີບທົ່ວໄປ ເພື່ອໃຫ້ຜູ້ທີ່ຕ້ອງການຮຽນມີວິຊາຊີບພາຍຫຼັງຮຽນຈົບໄປ.
- ອົງການ ໄຈກ່າ ເຮັດໜ້າທີ່ປຶກສາໃຫ້ ຄກລ ເປັນເວລາ 5 ປີ ໂຄງການຈະສິ້ນສຸດປີນີ້, ຄາດວ່າອີກປີໜ້າອາດຈະມີໂຄງການສືບຕໍ່.
- UNDP ສະເໜີຂໍ້ແນະນຳຕໍ່ກອງປະຊຸມ, ການປັບປັບມາດຕະຖານແຫ່ງຊາດ ລົມກັນຫຼາຍຄັ້ງຈາກກອງປະຊຸມວັງວຽງ ບໍ່ທັນມີຂໍ້ຕົກລົງ, ເມື່ອຮ່າງພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບ ຂອງຄະນະວິຊາການ ແລ້ວຕ້ອງມີແຜນນັ່ງລົມກັນວາງແຜນວຽກວ່າຈະເລີ່ມຕົ້ນຈາກໃສ ແລະ ບົດໃດກ່ອນທີ່ຈຳເປັນເຊັ່ນ: 6, 7,8,9 ...
- ລະບົບການຈັດບຸລິມະສິດໜ້າວຽກກວດກູ້ ຈະຕ້ອງມີແຜນຊັດເຈນ ຄືກັບການປັບປຸງມາດຖານແຫ່ງຊາດ ຊຶ່ງເປັນບຸລິມະສິດສູງສຸດ.

**ສັງລວມຜົນໄດ້ຮັບຈາກອງປະຊຸມ:**

- ການປັບປຸງມາດຕະຖານແຫ່ງຊາດ ບົດໃດຂອງມາດຕະຖານກ່ຽວຂ້ອງກັບວຽກຂອງໜ່ວຍງານໃດ ແມ່ນຕ້ອງຮັບຜິດຊອບ ເປັນຕົ້ນແມ່ນໜ່ວຍງານຄຸ້ມຄອງການເກັບກູ້ ແລະ ໜ່ວຍງານຄຸ້ມຄອງຄຸນນະພາບ ເປັນຫຼັກໃນການປັບປຸງ.
- ຮ່າງໜັງສືສະເໜີແຕ່ງຕັ້ງຄະນະວິຊາການຮັບຜິດຊອບໃນການປັບປຸງ, ຈາກນັ້ນ, ຫ້ອງການ ຄຊກລ ຈະແຕ່ງຕັ້ງຄະນະວິຊາການ ມາຈາກຫຼາຍພາກສ່ວນທີ່ກ່ຽວຂ້ອງມາເຮັດວຽກຮ່ວມກັນ ເພື່ອກຳນົດໄລຍະເວລາ ແລະ ສ້າງ Roadmap.
- ການຮ່າງບຸລິມະສິດວຽກງານກວດກູ້ ລບຕ ຈະສະເໜີແຕ່ງຕັ້ງຄະນະຮັບຜິດຊອບ ແລະ ຄະນະກຳມະການ ຊຶ່ງມາຈາກກະຊວງຕ່າງໆທີ່ກ່ຽວຂ້ອງ. ວຽກນີ້ຈະໄດ້ຂໍຊ່ຽວຊານຕ່າງປະເທດມາຊ່ວຍ, ເປັນຕົ້ນແມ່ນຈາກ UNDP?

- ໃຫ້ຮີບຮ້ອນທຳລາຍ ບີມໃຫ່ຍ ທີ່ພົບເຫັນມາດົນແລ້ວ, ບໍ່ໃຫ້ປະໄວ້ດົນຍ້ານເປັນອັນຕະລາຍແກ່ຊຸມຊົນ. ຜ່ານມາ ຄາຢູ່ຈຸດໃດທີ່ບໍ່ສາມາດແກ້ໄຂໄດ້ ສະເໜີໄປແກ້.
- ກຳນົດສົ່ງແຜນກວດກູ້ ລບຕ ປີ 2024 ໃຫ້ແຕ່ລະອົງການສົ່ງໃຫ້ ຄຊກລ ໃນວັນທີ 20 ມັງກອນ 2024.

ກອງປະຊຸມໄດ້ປິດລົງໃນເວລາ 16:00 ໂມງ, ວັນທີ 20 ທັນວາ 2023.

ເຊັນແທນ **ຫົວຫ້ອງການຄຊກລ**

ບຸນເພັງ ສີສະຫວັດ

ໜ່ວຍງານຄຸ້ມຄອງສຳຫຼວດ ແລະ ເກັບກູ້ ລບຕ